ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD. BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL LAO P.D.R
OFFICE TEL: (+856-21) 415645, FAX / TEL: (+856-21) 262984 , WWW.SOUVANNY.COM

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ເລກທີ: 0251 /ສວນ

ນະຄອນຫຼວງວຽງຈັນ,ວັນທີ 21 ກຸມພາ 2022

ໜັງສືແຈ້ງການ

ຮຽນ: ທ່ານຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
ທ່ານຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ;
ແລະ ຜູ້ຖືຮຸ້ນ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິຂອງກອງປະຊຸມສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ຄັ້ງທີ 01 ປະຈຳປີ 2022 ຄັ້ງວັນທີ 18/02/2022 ກ່ຽວກັບ ການລາອອກ ແລະ ການແຕ່ງຕັ້ງ ປະທານ, ຮອງ ປະທານ ສະພາບໍລິຫານ.

- ອີງຕາມ ມະຕິຂອງກອງປະຊຸມສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ຄັ້ງທີ 01/2022 ເລກທີ 0243 ລົງວັນທີ 18/02/2022.

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ (ສ.ວ.ນ) ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອຊາບມະຕິສຳຄັນຂອງ ກອງປະຊຸມສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ຄັ້ງທີ 01/2022 ວັນທີ 18/02/2022 ກ່ຽວກັບ ການລາອອກ ແລະ ການແຕ່ງຕັ້ງ ປະທານ, ຮອງປະທານ ສະພາບໍລິຫານ ສ.ວ.ນ ດັ່ງນີ້:

1. ຮັບຮອງການລາອອກຈາກການເປັນປະທານສະພາບໍລິຫານ ຂອງ **ທ່ານ ອຸ່ນ ຫຼ້າສຸກັນ** ແລະ ຮອງປະທານ ສະພາບໍລິຫານ ຂອງ **ທ່ານ ອານຸສອນ ອຸ່ນໄຕ** ຕາມໜັງສືລາອອກ ຂອງທັງ 2 ທ່ານ, ສະບັບລົງວັນທີ 10 ມັງກອນ 2022.
2. ຮັບຮອງການແຕ່ງຕັ້ງ **ທ່ານ ສົມຈິດ ອິນທະມິດ** ເປັນ ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ, ແຕ່ງຕັ້ງ **ທ່ານ ປອ ໄຊພອນ ກອງມະນີລາ** ເປັນ ຮອງປະທານສະພາບໍລິຫານ ແລະ **ທ່ານ ນາງ ຄຳໄຂ ລໍວັນ ໄຊ** ເປັນ ສະມາຊິກສະພາບໍລິຫານ. (ຊີວະປະຫວັດຫຍໍ້ຕາມເອກະສານຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງທຸກທ່ານເພື່ອຮັບຊາບດ້ວຍ.

ດ້ວຍຄວາມນັບຖືເປັນຢ່າງສູງ

ຜູ້ອຳນວຍການໃຫຍ່

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ອັດດາມາ ສຸຄະບັນດິດ

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ: ທ່ານ ສົມຈິດ ອິນທະມິດ
ສັນຊາດ: ລາວ
ວັນ/ເດືອນ/ປີເກີດ: 13 ມີນາ 1960
ການສຶກສາ: ປະລິນຍາໂທ ດ້ານ ເສດຖະສາດ ພັດທະນາ, ມະຫາວິທະຍາໄລ ມາກ ຕີນ ລຸເທີຣານເລ ວິດເຕີນແຍກ, ປະເທດ ເຢຍລະມັນ
ຕຳແໜ່ງ: ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ປະສົບການເຮັດວຽກ: - ວິຊາການ ສະຖານທູດລາວທີ່ນະຄອນຫຼວງເບີລິນ ປີ 1985-1986

- ວິຊາການ ພະແນກການອາຫຼແຜນກະສິກຳ, ຄະນະກະມະການການອາຫຼແຜນແຫ່ງລັດ ປີ 1987-1988
- ຜູ້ຊ່ວຍຮອງລັດຖະມົນຕີ ກະຊວງການຄ້າ ແລະ ການພົວພັນເສດຖະກິດຕ່າງປະເທດ ປີ 1989-1990
- ຮອງຫົວໜ້າກົມ ກົມຮ່ວມມືເສດຖະກິດ, ກະຊວງການຄ້າ ແລະ ພົວພັນເສດຖະກິດຕ່າງປະເທດ ປີ 1990-1993
- ຮອງຫົວໜ້າກົມ ກົມຮ່ວມມືເສດຖະກິດຕ່າງປະເທດ, ຄະນະກຳມະການແຜນການ ແລະ ການຮ່ວມມື ປີ 1994-1996
- ຫົວໜ້າກົມ ກົມຮ່ວມມືເສດຖະກິດອາຊຽນ ປີ 1996
- ຄະນະ ເປັນເຈົ້າໜ້າທີ່ອາວຸໂສດ້ານເສດຖະກິດຂອງ ສປປ ລາວ ປະຈຳອາຊຽນ(SOM) ປີ 1997-2005
- ຄະນະ ຄະນະເຈລະຈາກັບອົງການການຄ້າໂລກ ປີ 2004
- ຫົວໜ້າກົມ ກົມເສດຖະກິດ, ກະຊວງການຕ່າງປະເທດ ປີ 1999-2007
- ຫົວໜ້າກົມ ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ ປີ 2008-2011
- ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ປີ 2011-2014
- ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ປີ 2014-2021
- ຮອງຫົວໜ້າຄະນະ ຄະນະກຳມະການດ້ານເສດຖະກິດ-ການເງິນສະເພາະທິດສະດີສູນກາງພັກ ອັນທີ 25/01/2022-ເຖິງປະຈຸບັນ

ຊີວະປະຫວັດຫຍໍ້



ຊື່ - ນາມສະກຸນ ທ່ານ ປອ ໄຊພອນ ກອງມະນີລາ
ສັນຊາດ ລາວ
ວັນ/ເດືອນ/ປີເກີດ: 30/12/1973
ວຸດການສຶກສາ ປະລິນຍາເອກ ບໍລິຫານທຸລະກິດ ມະຫາວິທະຍາໄລ ຮິໂຣຊິມ່າ ປະເທດຍີ່ປຸ່ນ
ຕຳແໜ່ງ ຮອງປະທານສະພາບໍລິຫານສະພາບໍລິຫານ ແລະ ສະມາຊິກອິດສະຫຼະ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ປະສົບການເຮັດວຽກ:

- ວິຊາການ ບໍລິສັດ ລາວໂທລະຄົມ;
- ຜູ້ກວດສອບພາຍໃນ ບໍລິສັດ ໄຮຄິ ແຄຄອນ ຈຳກັດ;
- ຫົວໜ້າພະແນກການຕະຫລາດ ແລະ ປະຕິບັດການ ບໍລິສັດ ຄ້າຮຸ່ງໂຮດ ລາວ;
- ອາຈານສອນ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ;
- ຮອງຫົວໜ້າພາກວິຊາການບັນຊີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ; ແລະ
- ຫົວໜ້າພາກວິຊາການບັນຊີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ.

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ: ທ່ານ ນາງ ຄຳໄຂ ລໍວັນໄຊ

ຊັນຊາດ: ລາວ

ວັນ/ເດືອນ/ປີເກີດ: 21 ສິງຫາ 1978

ການສຶກສາ: ປະລິຍາຕີ ບໍລິຫານທຸລະກິດ, ວິທະຍາໄລ ເສດຖາບໍລິຫານທຸລະກິດ, ປະເທດລາວ

ຕຳແໜ່ງ: ສະມາຊິກສະພາບໍລິຫານ ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ປະສົບການເຮັດວຽກ:

- ພະນັກງານຂາຍ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 2000-2005
- ຫົວໜ້າຝ່າຍຂາຍ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 2005-2015
- ຜູ້ຈັດການຝ່າຍຈັດຊື້ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 2015 - ເຖິງປະຈຸບັນ